ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
Lao Culture Tourism Public Group Company

ເລກທີ 077 /ບທວລ

ນະຄອນຫຼວງວຽງຈັນ, ວັນທີ 04 APR 2025

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື;
ທ່ານ ຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ ທີ່ນັບຖື;
ທ່ານ ຜູ້ຖືຮຸ້ນ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ທີ່ນັບຖື,

ເລື່ອງ : ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 1 ປີ 2025

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ຂອງ ສຄຄຊ ສະບັບ ເລກທີ 15/ສສຄ ລົງວັນທີ 11 ທັນວາ ປີ 2024.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງ ວັນທີ 27 ກັນຍາ 2018.

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ (ບທວລ) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງ ກອງປະຊຸມສະພາບໍລິຫານ ຄັ້ງທີ 01 ປີ 2025 ເຊິ່ງຈັດຂຶ້ນໃນວັນທີ 18 ມີນາ 2025 ເວລາ 9:00 ໂມງ, ຢູ່ ສຳນັກງານກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

1. ກຳນົດເອົາວັນທີ 2 ເມສາ 2025 ເປັນມື້ປິດປຶ້ມທະບຽນຜູ້ຖືຮຸ້ນ ເພື່ອຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ໃນວັນທີ 30 ເມສາ 2025, ເວລາ 9:00 ໂມງ, ສະຖານທີ່ຫ້ອງປະຊຸມຊັ້ນ 4 : ບໍລິ ສັດລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳບໍລິການແລະການຄ້າຂາອອກ-ຂາເຂົ້າ (ພກອ).
2. ຮັບຮອງວາລະກອງປະຊຸມສາມັນຜູ້ຖືຮຸ້ນຂອງ ບທວລ ປະຈຳປີ 2024 :
   1) ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023
   2) ພິຈາລະນາ ແລະຮັບຮອງ ບົດລາຍງານການດຳເນີນທຸລະກິດ ຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະ ນະທຳລາວ ມະຫາຊົນ ປະຈຳປີ 2024.
   3) ພິຈາລະນາ ແລະ ຮັບຮອງ ເອກະສານລາຍງານການເງິນ ຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະ ທຳລາວ ມະຫາຊົນ ປະຈຳປີ 2024.
   4) ພິຈາລະນາ ແລະ ຮັບຮອງການວ່າຈ້າງຜູ້ອຳນວຍການໃຫ່ຍ ແລະປ່ຽນແປງສະມາຊິກສະພາບໍລິ ຫານຂອງກຸ່ມບໍລິສັດ.
   5) ພິຈາລະນາ ແລະຮັບຮອງ ການຊື້ຮຸ້ນຂອງບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ
   6) ພິຈາລະນາ ແລະ ຮັບຮອງ ການຂຶ້ນທະບຽນບັນດາບໍລິສັດລູກ.

ດັ່ງນັ້ນ, ຈຶ່ງຮຽນມາເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ.

ປະທານສະພາບໍລິຫານບໍລິສັດ

ເນຍເຫຼີຍ